ການເປີດງານສະແດງ ບຸນຮູບເງົາຍີ່ປຸ່ນ ເລີ້ມແຕ່ວັນທີ່ 2 /11/2007 - 11/11/2007 ຈະໄດ້ມີການສາຍ ຮູບເງົາຍີ່ປຸ່ນ ຢູ່ລາວ ເປັນເວລາ 10ມື້ລຽນ. ໃນການເປີດງານສະແດງ ບຸນຮູບເງົາຍີ່ປຸ່ນນີ້ ຈຸດປະສົງຫຼັກແມ່ນເພື່ອໃຫ້ຄົນລາວໄດ້ມ່ວນຊື່ນກັບການຊົມຮູບເງົາຈາກປະເທດຍີ່ປຸ່ນ ໃນນັ້ນຮູບເງົາ ຈະສະທ້ອນໃຫ້ເຫັນສັງຄົມ,ວັດທະນາທຳ,ການດຳລົງຊີວິດຕ່າງໆຂອງຍີ່ປຸ່ນ ທີ່ພວກເຮົາສາມາດສຳພັດໄດ້ໂດຍຜ່ານຮູບພາບ ໃນຟີມເລື່ອງຕ່າງໆທີ່ພວກເຮົາເອົານຳມາສະເໜີ. ນອກຈາກນັ້ນໃນໄລຍະທີ່ສາຍຮູບເງົາຕ່າງໆ ພວກເຮົາຍັງໄດ້ຈັດລາຍການແຂ່ງຂັນປະກວດຮ້ອງເພງຍີ່ປຸ່ນ, ລຳວົງລາວ-ຍີ່ປຸ່ນ ຂື້ນ. ພວກເຮົາຢາກຂໍເຊີນຊວນໃຫ້ຄົນຍີ່ປຸ່ນ, ຄົນລາວ...ເຂົ້າຮ່ວມງານດັ່ງກ່າວ.

<u>ລາຍລະອຽດຕ່າງໆແມ່ນໄດ້ຂຽນໄວ້ດັ່ງລຸ່ມນີ້:</u>

### (1)ການສາຍຮູບເງົາຍີ່ປຸ່ນ

-ສະຖານທູດຍີ່ປຸ່ນປະຈຳລາວ, Japan Foundtion(ມູນນິທິຍີ່ປຸ່ນ), ກະຊວງວັດທະນາທຳ, ສູນຮ່ວມມືລາວ-ຍີ່ປຸ່ນ ເປັນເຈົ້າພາບຈັດງານ

★ວັນເວລາ: <u>ວັນທີ່ 2/11/2007 - 11/11/2007 (10 ວັນ)</u>

ວັນຈັນ - ວັນສຸກ: 18:30 - 20:30　　ວັນເສົາ,ອາທິດ: 16:00 - 18:00(ມື້ 1 ຕໍ່ເລື່ອງ 1)

★ສະຖານທີ່: LAO-ITECC ໂຮງຮູບເງົາຊັ້ນ2 (ວັນທີ່ 2/11/2007 ການສາຍຮູບເງົາຈະໄດ້ຈັດພິທີທີ່ຫໍວັດທະນາທຳເລີ້ມ19:00 ເປັນຕົ້ນໄປ)

★ຊື່ເລືອງທີ່ນຳມາສາຍ:<u>ウオーターボーイズ</u>、<u>のど自慢</u>、<u>男はつらいよ・寅次郎夕焼け小焼け</u>、<u>椿三十郎</u>、<u>私をスキーに連れて行って</u>、<u>ロボコン</u>、<u>赤ひげ</u>、<u>どら平太</u>、<u>遠き落日</u>、<u>菊次郎の夏</u>（上映予定順）

★ບໍ່ເສຍຄ່າຜ່ານປະຕູ:<u>ແມ່ນໃຜກໍ່ສາມາດເຂົ້າຊົມໄດ້. ມີ 260 ບ່ອນນັ່ງ. ບໍ່ມີການລົງທະບຽນ</u>

## (2)ການແຂ່ງຂັນປະກວດຮ້ອງເພງຍີ່ປຸ່ນ

-ສູນຮ່ວມມືລາວ-ຍີ່ປຸ່ນ ເປັນຜູ້ຕ່າງໜ້າຈັດການແຂ່ງຂັນ

★ວັນເວລາ: วັນເສົາ ທີ3/11/2007 , 18:30 - 21:00

★ສະຖານທີ່:LAO-ITECC

★ເງື່ອນໄຂຜູ້ສະມັກ:ເປັນຄົນລາວ, ອາຍຸ 15 - 35 ປີ, ບໍ່ແມ່ນນັກຮ້ອງມືອາຊີບ

ການຕັດສິນຮອບຄັດເລືອກ ວັນເສົາ ທີ 20/10/2007 ເວລາ 09:00 ເປັນຕົ້ນໄປ ຈັດຂຶ້ນທີ່ ສູນຮ່ວມມື ລາວ-ຍີ່ປຸ່ນ

ໃບສະມັກສາມາດ download ຈາກ Homepage ຂອງສູນຮ່ວມມືລາວ-ຍີ່ປຸ່ນ http://www.ljcenter.org

ປິດຮັບສະມັກ: ວັນທີ10/10/2007 ຮັບສະມັກພຽງແຕ່ 40 ກຸ່ມເທົ່ານັ້ນ, ພິເສດສະເພາະຄົນຍີ່ປຸ່ນ ທີ່ຈະແຂ່ງຂັນປະກວດຮ້ອງເພງລາວ ພວກເຮົາຍັງກໍາລັງເປີດຮັບສະມັກພິເສດ.

## (3)ລໍາວົງລາວ-ຍີ່ປຸ່ນ

-ສະມາຄົມຄົນຍີ່ປຸ່ນທີ່ຢູ່ລາວ ຮ່ວມກັບສູນຮ່ວມມືລາວ-ຍີ່ປຸ່ນ ເປັນຜູ້ຈັດ

★ວັນເວລາ: ວັນອາທິດ ທີ່11/11/2007 , 18:30 - 20:30

★ສະຖານທີ່:LAO-ITECC

★ບໍ່ເສຍຄ່າ: ບໍ່ຕ້ອງລົງທະບຽນ, ແມ່ນໃຜກໍ່ສາມາດເຂົ້າຮ່ວມໄດ້

ລໍາວົງລາວ-ຍີ່ປຸ່ນ:ແມ່ນການຟ້ອນຕາມຈັດວະເພງຂອງສອງປະເທດລາວ-ຍີ່ປຸ່ນເປັນວົງມົນກວ້າງ. ຊິມີການ ຟ້ອນແບບ ຍີ່ປຸ່ນ ປະສົມປະສານການຟ້ອນລໍາວົງແບບລາວ.

ລາຍລະອຽດຕິດຕໍ່: ສູນຮ່ວມມືລາວ-ຍີ່ປຸ່ນ ພະແນກແລກປ່ຽນວັດທະນາທໍາ ແລະຂໍ້ມູນຂ່າວສານຜູ້ຮັບຜິດຊອບ: ນ ຮ່ານາໄຊໂນ, ທອງດໍາ, ອາລິສາ E-mail: ljcactivity@laopdr.com

LAO-ITECC : http//www.LAO-ITECC.com